ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. Laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໔໕ ປພຖຂ/ ໐໗໔ມ໐໘**

# ບົດຄວາມ

## ສະພາລວງໂລກ

ກອງປະຊຸມສະພາລວງໂລກ ຄັ້ງທີ 5 ຊຸດທີ 6 ທີ່ໄດ້ໄຂຂຶ້ນ ໃນທ້ອງເດືອນ ກໍຣະກະດາ 2008 ນີ້, ກໍບໍ່ໄດ້ແຕກຕ່າງກັບທີ່ຜ່ານມາ ເພາະອຳນາດ ນິຕິບັນຍັດ, ອຳນາດບໍຣິຫານ, ແລະອຳນາດຕຸລາການ ທີ່ຣະບຸໄວ້ໃນກົດໝາຍ ຣັຖທັມນູນ ໃຫ້ແຍກກັນອອກປະຕິບັດໜ້າທີ່ ຂອງໃຜລາວ ຢ່າງເປັນເອກຣາດ, ກໍຍັງຖືກແຊກແຊງ ແລະຄວບຄຸມ ຈາກພັກຣັດ ຜເດັດການເໝືອນເດີມ.

ພັກຣັດ ນອກຈາກໃຊ້ເວທີ ສະພາປະຊາຊົນ ເປັນບ່ອນຊອກຮູ້ ວ່າ ແມ່ນຜູ້ໃດ ຍັງສນັບສນູນພັກຣັດແລະ ແມ່ນ ຜູ້ໃດຕ້ານພັກຣັດ ກ່ອນທີ່ຈະຖືກກວາດລ້າງ ດັບສູນ ຕາມທິດທາງຄອມມິວນິສທີ່ທ່ານ ບົວສອນ ບຸບຜາວັນ ໄດ້ປະກາດ ຮັບເອົາ ຢ່າງ ຫົວເດັດ ຕີນຂາດ ມາແລ້ວນັ້ນ, ພັກຣັດ ຍັງໃຊ້ກອງປະຊຸມສະພານີ້ ເປັນບ່ອນ ໂຄສະນາຊວນເຊື່ອ ໃຫ້ປະຊາຊົນລາວ, ໃຫ້ອົງການຈັດຕັ້ງສາກົນ ແລະ ໃຫ້ນັກທຸຣະກິດການຄ້າ ໄດ້ຫລົງເຊື່ອ ວ່າ ພັກຣັດມີຄວາມເຄົາຣົບ ຕໍ່ສິດທິຣີພາບ ຂອງ ປະຊາຊົນ ເປັນຢ່າງດີ ອັນເປັນເງື່ອນໄຂ ຫລອກລໍ້ ຂໍການຊ່ວຍເຫລືອ, ຊັກຊວນໃຫ້ນັກລົງທຶນ ແລະ ນັກ ທ່ອງທ່ຽວ ເອົາເງິນມາເຂົ້າຖົງສ່ວນຕົວ ຂອງພັກຣັດ ຫລາຍຕື່ມຂຶ້ນອີກ.

ແຕ່ກອງປະຊຸມສະພາຄັ້ງນີ້, ບໍ່ໄດ້ເປັນໄປຕາມ ຄວາມເພີ້ຝັນ ຂອງພັກຣັດຈັກໜ່ອຍເລີຍ, ຕຣົງກັນຂ້າມ, ບັນດາຜູ້ແທນ ແລະບຸກຄົນສຳຄັນ ຜູ້ຮັກຊາດ ທີ່ເຂົ້າຮ່ວມກອງປະຊຸມ...ແທນທີ່ຈະກ່າວຍ້ອງຍໍ ສນັບສນູນພັກຣັດ, ຊ້ຳພັດ ໄປເປີດໂປ່ງຄວາມບໍ່ໂປ່ງໃສ, ເປີດໂປ່ງຂອບເຂດຄວາມສາມາດ ທີ່ມີຈຳກັດໃນການບໍຣິຫານປະເທດຊາດ ແລະເປີດໂປ່ງ ເລ້ກົນຂາຍຊາດຂາຍປະຊາຊົນ ຂອງພັກຣັດຊ້ຳຕື່ມ.

ການອອກມາເປີດໂປ່ງໃບໜ້າ ອັນສົກກະປົກ, ຂາຍຊາດຂາຍປະຊາຊົນແລະຕ້ານສາກົນຂອງພັກຣັດ ຄັ້ງນີ້, ມັນໄດ້ສ້າງຄວາມສົນໃຈເປັນພິເສດ ໃຫ້ແກ່ອົງການຈັດຕັ້ງສາກົນ, ບັນດາປະເທດ ທີ່ເຄີຍໃຫ້ ການ ຊ່ວຍເຫລືອ ແລະນັກລົງທຶນ. ເພາະ, ນອກຈາກພວກເຂົາຈະໄດ້ຂໍ້ມູນທີ່ຖືກຕ້ອງ ຢ່າງເປັນ ທາງການ ກ່ຽວກັບການໂກງພາສີ, ການສໍ້ຣາດ ບັງຫລວງ, ການຄ້າໄມ້ເຖື່ອນ, ຄ້າຢາເສບຕິດ, ຄ້າ ມະນຸດ, ບໍ່ເອົາໃຈໃສ່ ຕໍ່ນັກຣົບວີຣະຊົນ ຜູ້ອອກໄປກິນເບັ້ຽບຳນານ ແລະຜູ້ເສັຽອົງຄະ ໃນຍາມ ສູ້ຣົບ ແລ້ວ. ພວກເຂົາ ຍັງໄດ້ຮູ້ຄວາມຫລົ້ມເຫລວຈາກປາກ ຂອງ ຜູ້ແທນ ໃນກອງປະຊຸມ ສະພາ. ພັກຣັດ ບໍ່ໄດ້ເອົາໃຈໃສ່ຊ່ວຍເຫລືອ ປະຊາຊົນທີ່ມີຄວາມທຸກຍາກລຳບາກ ຢູ່ຕາມຊົນນະບົດ ສອກຫລີກ ຫ່າງໄກ, ລູກຫລານ ຂອງປະຊາຊົນກໍບໍ່ໄດ້ເຂົ້າໂຮງຮຽນ ແລະບໍ່ໄດ້ຮັບການປິ່ນປົວເມື່ອເວລາເຈັບເປັນ. ປ່ອຍປະໃຫ້ ປະເທດຊາດກາຍເປັນແຫລ່ງອະບາຍະມຸກ, ເປັນແຫລ່ງຂຍາຍ ເຊື້ອໂຣກເອສ. ແມ່ຍິງ ທີ່ຖືພາ ກໍບໍ່ໄດ້ເອົາໃຈໃສ່ ດູແລສຸຂະພາບ ຂອງ ພວກເຂົາເຈົ້າ, ຈຶ່ງທຳໃຫ້ພວກເຂົາ ມີຄວາມສ່ຽງສູງ ຕໍ່ການເສັຽຊີວິດ ເມື່ອເວລາຄອດລູກ.

ບັນດາຜູ້ແທນແລະຜູ້ຮັກຊາດທັງຫລາຍ ທີ່ມີຄວາມກ້າຫານ ນຳເອົາຂໍ້ມູນ ຄວາມເປັນຈິງຕ່າງໆ ທີ່ ປະຊາຊົນໄດ້ຮັບ ຄວາມທຸກທໍຣະມານດົນນານ ຫລາຍກວ່າ 3 ທົສວັດແລ້ວມາເປີດໂປ່ງ ແລະຕຳນິຕິຕຽນພັກຣັດ ໃນການບໍຣິຫານ ປະເທດຊາດ ແບບ ຜເດັດການພັກດຽວໃນຄັ້ງນີ້. ມັນກໍສົມຄວນ ທີ່ ຈະໄດ້ຮັບຄວາມຍ້ອງຍໍສັລເສີນ ວ່າເປັນຜູ້ຮັກຊາດ ຢ່າງແທ້ຈິງ, ຖ້າຫາກວ່າ ແມ່ນ ຢູ່ໃນ ປະເທດເສຣີ ທີ່ທຸກຄົນ ມີສິດທິເສຣີພາບ ໃນການອອກຄວາມຄິດຄວາມເຫັນ. ແຕ່ສຳລັບ ສປປລາວແລ້ວ, ຂໍ້ສເນີ ວິທີການແກ້ໄຂຂອງບັນດາທ່ານ ຢູ່ໃນສະພາໃຫ້ພັກຣັດ ປະຕິບັດກົດໝາຍ ຢ່າງເຂັ້ມງວດ ນຳເອົາຜູ້ ກະທຳຜິດ ມາລົງໂທດນັ້ນ, ບໍ່ແມ່ນວິທີແກ້ໄຂທີ່ຖືກຕ້ອງ...ເພາະທ່ານ ບົວສອນ ບຸບຜາວັນ ໄດ້ບອກ ຢ່າງຈະແຈ້ງແລ້ວວ່າ "ບໍ່ມີການພັທນາປະຊາທິປະໄຕ, ມີແຕ່ປະຕິບັດ ຕາມທິດທາງ ຄອມມີວນິສ ຢ່າງດຽວ" ຄື: ເວົ້າຢ່າງນຶ່ງ, ແຕ່ເຮັດໄປອີກຢ່າງນຶ່ງ. ມີກົດໝາຍດີໆ ເພື່ອຄຸ້ມຄອງຣັດ ຄຸ້ມຄອງ ສັງຄົມທີ່ພັກຣັດ ໄດ້ແຕ່ງຂຶ້ນ ໂດຍຜ່ານການຮັບຮອງ ຈາກສະພາຄັກແນ່ມາແລ້ວຫລາຍຢ່າງນັ້ນ, ກໍເປັນພຽງເອກະສານຫລອກລວງປະຊາຊົນ ແລະ ຫລອກລວງ ສາກົນ ໃຫ້ຫລົງເຊື່ອ ເພື່ອຈອບຂໍການ ຊ່ວຍເຫລືອ ເອົາມາສ້າງຮັ່ງຄູນມີ ໃຫ້ພວກເຂົາເທົ່ານັ້ນເອງ. ຂໍ້ສເນີຕ່າງໆຢູ່ໃນສະພາ

ກໍເປັນພຽງແຕ່ ການອອກມາຫລີ້ນລະຄອນຕາມເກັມການເມືອງຂອງພັກຣັດ ເພື່ອຫລອກລວງປະຊາຊົນ ເໝືອນດັ່ງທີ່ ຜ່ານໆມາເທົ້ານັ້ນເອງ.

ດັ່ງນັ້ນ, ບັນດາທ່ານຜູ້ຮັກຊາດທັງຫລາຍ ທີ່ເຂົ້າຮ່ວມກອງປະຊຸມສະພາຄັ້ງນີ້, ຈິ່ງໄດ້ຮຽກຮ້ອງ ແລະບີບຣັດ ໃຫ້ພັກຣັດຕ້ອງປ່ຽນຣັຖບານໂດຍໄວ ກ່ອນທີ່ຈະໝົດໂອກາດ.

**ສູນກາງຕາງໜ້າ**
**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໔໗ ກໍຣະກະດາ ໒໐໐໗.**

**ຄວາມເຫັນໂຄສົກ:**

ດັ່ງທີ່ປະຊາຊົນລາວ ແລະຊາວໂລກຮູ້ດີວ່າ ພັກຣັດວຽງຈັນ ເປັນຣັຖບານຫຸ່ນ, ເປັນຣັຖບານ ສໍ້ຣາດ ບັງຫລວງ, ບໍ່ໄດ້ເປັນຫ່ວງເປັນໃຍ ແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນ ແຕ່ຢ່າງໃດເລີຍ. ຜ່ານລະຍະຄອງອໍານາດມາ ໄດ້ 33 ປີແລ້ວນີ້, ພັກຣັດໄດ້ຂາຍດິນລາວໄປແລ້ວ ຫລາຍກວ່າ 1,000.000ha. ໃນຮູບໃຫ້ສໍາປະທານທີ່ດິນ. ນອກຈາກນີ້, ຍັງໄດ້ຂາຍ ບໍ່ຄໍາ, ບໍ່ທອງແດງໄປແລ້ວ 2 ແຫ່ງ, ສ້າງເຂື່ອນໄຟຟ້າຫລາຍແຫ່ງ...ແຕ່ປະຊາຊົນລາວ ຍັງນຸ່ງຫົ່ມ ເສື້ອຜ້າຂາຍສ້ອຍຢູ່ເໝືອນເດີມ. ຖ້າຫາກປະຊາຊົນລາວ ຍັງປ່ອຍໃຫ້ພັກຣັດຜເດັດການ ຄອງອໍານາດ ອີກຕໍ່ໄປ...ເມືອງລາວ ຕ້ອງຕົກເປັນເມືອງຂຶ້ນຂອງຕ່າງຊາດ ຢ່າງສິ້ນເຊີງ.